ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 132 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 04 ສິງຫາ 2020

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງ ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 06/ສພຊ, ລົງວັນທີ 30 ມິຖຸນາ 2020 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 09/ຄປຈ, ລົງວັນທີ 14 ກໍລະກົດ 2020.

ປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 06 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 30 / 06 / 20

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ ກ່ຽວກັບການຮັບຮອງເອົາ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍ ການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນວາລະກອງປະຊຸມ ຄັ້ງວັນທີ 30 ມິຖຸນາ 2020.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 83 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 30 ມິຖຸນາ 2020

# ກົດໝາຍວ່າດ້ວຍ
# ການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍ
# ການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ

**ມາດຕາ 1 ການປັບປຸງເນື້ອໃນບາງມາດຕາຂອງກົດໝາຍ**

ກົດໝາຍສະບັບນີ້ ກຳນົດເນື້ອໃນການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເພື່ອໃຫ້ສອດຄ່ອງກັບການຈັດຕັ້ງປະຕິບັດ ພາລະບົດບາດ ແລະ ວຽກງານຕົວຈິງ ດັ່ງນີ້:

**ມາດຕາ 11 ການກຳນົດຈຳນວນສະມາຊິກສະພາ**

ການກຳນົດຈຳນວນສະມາຊິກສະພາ ໃຫ້ປະຕິບັດ ດັ່ງນີ້:

1. ຮັບປະກັນການເຮັດວຽກເປັນໝູ່ຄະນະ;

2. ອີງໃສ່ທີ່ຕັ້ງ, ຄວາມສຳຄັນ, ຄວາມຈຳເປັນ ແລະ ຈຸດພິເສດທາງດ້ານການເມືອງ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເສດຖະກິດ, ວັດທະນາທຳ-ສັງຄົມຂອງແຕ່ລະແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ;

3. ການກຳນົດຈຳນວນສະມາຊິກສະພາແຫ່ງຊາດ ໃຫ້ເອົາຈຳນວນພົນລະເມືອງເປັນຫົວໜ່ວຍຄິດໄລ່ ຄື ແຂວງທີ່ມີພົນລະເມືອງ ສອງຮ້ອຍຫ້າສິບພັນ ຄົນລົງມາ ໃຫ້ມີສະມາຊິກສະພາແຫ່ງຊາດ ຫົກຄົນ, ແຂວງທີ່ມີພົນລະເມືອງເກີນ ສອງຮ້ອຍຫ້າສິບພັນຄົນ ຂຶ້ນໄປ ໃຫ້ເພີ່ມສະມາຊິກສະພາແຫ່ງຊາດ ໜຶ່ງຄົນ ຕໍ່ພົນລະເມືອງ ຫ້າສິບພັນຄົນ, ແຕ່ສູງສຸດບໍ່ໃຫ້ເກີນ ຊາວຄົນ;

4. ການກຳນົດຈຳນວນສະມາຊິກສະພາປະຊາຊົນ ແຂວງ, ນະຄອນຫຼວງ ໃຫ້ເອົາເມືອງເປັນຫົວໜ່ວຍຄິດໄລ່ ແຕ່ຈຳນວນລວມທົ່ວ ແຂວງ, ນະຄອນຫຼວງ ຕ່ຳສຸດບໍ່ໃຫ້ຫຼຸດ ຊາວຫ້າຄົນ ແລະ ສູງສຸດບໍ່ໃຫ້ເກີນ ຫົກສິບຄົນ.

ຈຳນວນຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາ ໃຫ້ມີ ເພດ, ເຜົ່າ, ໄວອາຍຸ, ຜູ້ເກົ່າ ແລະ ຜູ້ໃໝ່, ຈາກຫຼາຍສາຂາອາຊີບ ທັງພາກລັດ ແລະ ເອກະຊົນ, ຕົວແທນຂອງບັນດາຊັ້ນຄົນ.

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ກຳນົດຈຳນວນຜູ້ສະໝັກຮັບເລືອກຕັ້ງ ແລະ ຈຳນວນສະມາຊິກສະພາແຫ່ງຊາດ ແລະ ຈຳນວນສະມາຊິກສະພາປະຊາຊົນຂັ້ນແຂວງ ໃນແຕ່ລະເຂດເລືອກຕັ້ງໂດຍແມ່ນປະທານປະເທດ ເປັນຜູ້ອອກລັດຖະດຳລັດປະກາດ ເປັນທາງການຢ່າງຊ້າ ສີ່ສິບຫ້າວັນ ກ່ອນວັນເລືອກຕັ້ງ.

ມາດຕາ 25 ການແຕ່ງຕັ້ງຄະນະກຳມະການເລືອກຕັ້ງລະດັບຊາດ

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຕົກລົງແຕ່ງຕັ້ງຄະນະກຳມະການເລືອກຕັ້ງລະດັບຊາດ ແລ້ວສະເໜີປະທານປະເທດ ອອກລັດຖະດຳລັດປະກາດເປັນທາງການຢ່າງຊ້າ ເກົ້າສິບວັນ ກ່ອນວັນເລືອກຕັ້ງ.

ຄະນະກຳມະການເລືອກຕັ້ງລະດັບຊາດ ປະກອບດ້ວຍ ປະທານ, ຮອງປະທານ ແລະ ກຳມະການ, ແຕ່ຈຳນວນຄະນະກຳມະການ ບໍ່ໃຫ້ເກີນ ສິບເຈັດຄົນ.

ມາດຕາ 27 ການແຕ່ງຕັ້ງຄະນະກຳມະການເລືອກຕັ້ງລະດັບທ້ອງຖິ່ນ

ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແລະ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເປັນຜູ້ຕົກລົງແຕ່ງຕັ້ງຄະນະກຳມະການເລືອກຕັ້ງຂັ້ນຂອງຕົນ ແລ້ວປະກາດເປັນທາງການຢ່າງຊ້າ ຫົກສິບວັນ ກ່ອນວັນເລືອກຕັ້ງ.

ຄະນະກຳມະການເລືອກຕັ້ງຂັ້ນແຂວງ ປະກອບດ້ວຍ ປະທານ, ຮອງປະທານ ແລະ ກຳມະການ, ແຕ່ຈຳນວນຄະນະກຳມະການດັ່ງກ່າວ ບໍ່ໃຫ້ເກີນ ສິບຫ້າຄົນ.

ຄະນະກຳມະການເລືອກຕັ້ງຂັ້ນເມືອງ ປະກອບດ້ວຍ ປະທານ, ຮອງປະທານ ແລະ ກຳມະການ, ແຕ່ຈຳນວນຄະນະກຳມະການດັ່ງກ່າວ ບໍ່ໃຫ້ເກີນ ສິບສາມຄົນ.

ມາດຕາ 41 ການເລືອກຕັ້ງແທນ

ການເລືອກຕັ້ງແທນ ຈະໄດ້ຈັດຂຶ້ນເມື່ອສະມາຊິກສະພາໃນເຂດເລືອກຕັ້ງໃດໜຶ່ງ ຫາກຫຼຸດລົງຕາມກໍລະນີທີ່ໄດ້ກຳນົດໄວ້ໃນມາດຕາ 31 ແລະ ມາດຕາ 34 ຂອງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ.

ການເລືອກຕັ້ງແທນ ຈະດຳເນີນໄດ້ກໍຕໍ່ເມື່ອອາຍຸການຂອງສະພາຊຸດນັ້ນ ຍັງເຫຼືອຢ່າງໜ້ອຍ ສອງປີ ນັບແຕ່ວັນທີ່ສະມາຊິກສະພາເຂດເລືອກຕັ້ງນັ້ນຫຼຸດລົງ.

ມາດຕາ 42 ວິທີການເລືອກຕັ້ງແທນ

ການເລືອກຕັ້ງແທນສະມາຊິກສະພາ ມີ ສອງວິທີ ໂດຍແມ່ນຄະນະປະຈຳສະພາເປັນຜູ້ຕົກລົງ ດັ່ງນີ້:

1. ວິທີທົ່ວໄປ

ຄະນະປະຈຳສະພາທີ່ກ່ຽວຂ້ອງ ເປັນຜູ້ຕົກລົງແຕ່ງຕັ້ງຄະນະກຳມະການເລືອກຕັ້ງ ແລະ ກຳນົດວັນເວລາເລືອກຕັ້ງແທນ. ການດຳເນີນການເລືອກຕັ້ງແທນຕາມວິທີທົ່ວໄປ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

2. ວິທີສະເພາະ

ຄະນະປະຈຳສະພາ ເປັນຜູ້ເລືອກເອົາ ຜູ້ສະໝັກຮັບເລືອກຕັ້ງ ທີ່ໄດ້ຮັບຄະແນນສຽງຫຼາຍຖັດຈາກຜູ້ໄດ້ຮັບເລືອກຕັ້ງເປັນສະມາຊິກສະພາທີ່ກ່ຽວຂ້ອງໃນເຂດເລືອກຕັ້ງນັ້ນ ແລະ ມີມາດຕະຖານຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ. ໃນກໍລະນີຜູ້ກ່ຽວບໍ່ມີເງື່ອນໄຂເລືອກຕັ້ງແທນ ໃຫ້ເລື່ອນເອົາຜູ້ມີຄະແນນຖັດໄປນັ້ນ ເປັນຜູ້ໄດ້ຮັບການເລືອກຕັ້ງແທນ ແລ້ວລາຍງານຕໍ່ກອງປະຊຸມສະພາ.

ມາດຕາ 2 ການປັບປຸງແທນເນື້ອໃນຂອງມາດຕາ

ກົດໝາຍສະບັບນີ້ ປ່ຽນແທນເນື້ອໃນມາດຕາ 11, 25, 27, 41 ແລະ 42 ຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 66/ສພຊ, ລົງວັນທີ 14 ທັນວາ 2015.

ມາດຕາ 3 ຜົນສັກສິດ

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ເປັນຕົ້ນໄປ ແລະ ໃຫ້ນຳເອົາກົດໝາຍສະບັບນີ້ ພິມລົງໃນຈົດໝາຍເຫດທາງລັດຖະການຕາມພາຍຫຼັງ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້